ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 1884/ອຄ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2022

# ແຈ້ງການ

**ເຖິງ:** ສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນໍ້າມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນໍ້າມັນເຊື້ອໄຟ.

**ເລື່ອງ:** ແຈ້ງປັບຂຶ້ນລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 168/ຄປຈ, ລົງວັນທີ 06 ມິຖຸນາ 2022.
- ອີງຕາມ ດໍາລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດໍາລັດວ່າດ້ວຍ ທຸລະກິດນໍ້າມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 631/ຫສນຍ, ລົງວັນທີ 09 ພຶດສະພາ 2022.
- ອີງຕາມ ໜັງສືສະເໜີ ກ່ຽວກັບ ການປັບຫຼຸດອັດຕາອາກອນຊົມໃຊ້ຈາກນໍ້າມັນເຊື້ອໄຟ ສະບັບເລກທີ 3654/ຫກ, ລົງວັນທີ 14 ທັນວາ 2022;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງ ລາຄານໍ້າມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານໍ້າມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນໍ້າມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກະຊວງອຸດສາຫະກໍາ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງ ສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນໍ້າມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນໍ້າມັນເຊື້ອໄຟ ຊາບ ແລະ ປະຕິບັດ ດັ່ງນີ້:**

1. ປັບຂຶ້ນລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ທຸກຊະນິດ ຄື: ນໍ້າມັນແອັດຊັງພິເສດ ປັບຂຶ້ນ 410 ກີບ/ລິດ, ນໍ້າມັນແອັດຊັງທໍາມະດາ ປັບຂຶ້ນ 460 ກີບ/ລິດ ແລະ ນໍ້າມັນກາຊວນ ປັບຂຶ້ນ 560 ກີບ/ລິດ.
   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນຈຸດນະຄອນຫຼວງວຽງຈັນ:

ຫົວໜ່ວຍ:ລິດ.

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ປະຈຸບັນ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 23.800 | 24.210 | 410 | 1.72 | |
| 2 | ອຊ ທໍາມະດາ | 19.360 | 19.820 | 460 | 2.38 | |
| 3 | ກາຊວນ | 18.530 | 19.090 | 560 | 3.02 | |

(ສໍາລັບລາຄາຂາຍຍ່ອຍໃນເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ ແມ່ນໃຫ້ເລີ່ມປະຕິບັດວັນທີ 22 ທັນວາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 1211/ກຄພນ, ລົງວັນທີ 21 ທັນວາ 2022 ຈົນກວ່າຈະມີການປ່ຽນແປງ.
4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1848/ອຄ, ລົງວັນທີ 14 ທັນວາ 2022.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ເຊັນແທນລັດຖະມົນຕີ
ຮອງລັດຖະມົນຕີ

ບຸນເຫຼືອ ດວງສະຫວັນ

ບ່ອນສົ່ງ:
- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນໍ້າມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 22 ທັນວາ 2022, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **24,210** | **19,820** | **19,090** |
| 2 | ແຂວງຜົ້ງສາລີ | **25,200** | **20,810** | **20,080** |
| 3 | ແຂວງຫຼວງນໍ້າທາ | **24,700** | **20,320** | **19,580** |
| 4 | ແຂວງອຸດົມໄຊ | **24,880** | **20,490** | **19,760** |
| 5 | ແຂວງບໍ່ແກ້ວ | **24,310** | **19,920** | **19,190** |
| 6 | ແຂວງຫຼວງພະບາງ | **24,710** | **20,330** | **19,600** |
| 7 | ແຂວງໄຊຍະບູລີ | **24,530** | **20,150** | **19,420** |
| 8 | ແຂວງຫົວພັນ | **24,710** | **20,330** | **19,600** |
| 9 | ແຂວງຊຽງຂວາງ | **24,400** | **20,010** | **19,280** |
| 10 | ແຂວງວຽງຈັນ | **24,210** | **19,820** | **19,090** |
| 11 | ແຂວງບໍລິຄຳໄຊ | **24,320** | **19,940** | **19,210** |
| 12 | ແຂວງຄຳມ່ວນ | **24,240** | **19,850** | **19,120** |
| 13 | ແຂວງສະຫວັນນະເຂດ | **24,240** | **19,850** | **19,120** |
| 14 | ແຂວງສາລະວັນ | **24,490** | **20,110** | **19,380** |
| 15 | ແຂວງຈຳປາສັກ | **24,270** | **19,880** | **19,150** |
| 16 | ແຂວງເຊກອງ | **24,490** | **20,110** | **19,380** |
| 17 | ແຂວງອັດຕະປື | **24,540** | **20,150** | **19,420** |
| 18 | ແຂວງໄຊສົມບູນ | **24,630** | **20,240** | **19,520** |

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2022

**ຫົວໜ້າກົມ**

ພູວຽງ ພົງສາ